ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 4864-ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 15 OCT 2026

ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບ ວຽກຈັດຊື້ ໝໍ້ແປງໄຟຟ້າ 22/0.4kV, 800kVA ຂອງເຄື່ອງຈັກເບີ: 7&8 ເຂື່ອນໄຟຟ້ານ້ຳງື່ມ-1.

ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2024 ລົງວັນທີ 12/04/2024.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍກົດໝາຍ-ສັນຍາ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ: 20/10/2026 ເຖິງວັນທີ: 18/11/2026, ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສຳນັກງານຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141, 316 834.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 20/10/2026 ເຖິງວັນທີ: 18/11/2026, ໃນລາຄາ 500,000 (ຫ້າແສນ) ກີບ/ຊຸດ, ວິທີການຊຳລະຕ້ອງເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ການລົງສຳຫຼວດ ແລະ ເກັບກຳຂໍ້ມູນ ຈະໄດ້ຈັດຂຶ້ນໃນວັນທີ: 20/11/2026 ເວລາ 14:00 ໂມງ, ທີ່ ບ້ານແສງສະຫວ່າງ, ເມືອງແກ້ວອຸດົມ, ແຂວງວຽງຈັນ.

ສຳລັບການເດີນທາງ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເປັນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມການສຳຫຼວດ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ, ວັນທີ 04/12/2026 ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 04/11/2026. ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວຽງ ສຸນັນທະລາດ

ຮັກສາການ ຜູ້ອຳນວຍການໃຫຍ່